Produced by NSW HEALTH DEPARTMENT

English
June 2001
[DOH-7125]

# ໂຣກຖ່າຍທ້ອງ Giardiasis

## Giardiasis

Giardiasis ແມ່ນຫຍັງ?

- Giardiasis ແມ່ນການຕິດເຊື້ອຊຶ່ງສ່ວນໃຫຍ່ແມ່ນເປັນທີ່ລຳໄສ້ນ້ອຍ ຊຶ່ງເກີດຈາກແມ່ທ້ອງ ຊຶ່ງເອີ້ນວ່າ Giardia lamblia. ໄດ້ມີການລາຍງານຢ່າງເປັນທາງການວ່າພົບ Giardiasis ໃນຄົນແລະໃນຕົວສັດຫຼາຍຊນິດ.
- Giardiasis ສາມາດເກີດຂຶ້ນໄດ້ກັບທຸກໆຄົນ; ຢ່າງໃດກໍດີ, ມັກເປັນຫຼາຍໃນເດັກນ້ອຍໆ, ເດັກນ້ອຍ ແລະ ຜູ້ໃຫຍ່ອາຍຸ ຈາກ 20-40 ປີ.
- Giardiasis ແມ່ນພຍາດທີ່ຕ້ອງໄດ້ລາຍງານໃຫ້ທາງການຊາບຢູ່ໃນຣັດ NSW. ຫ້ອງທົດລອງທີ່ຄົ້ນພົບພຍາດນີ້ຕ້ອງໄດ້ລາຍງານໃຫ້ທາງຜແນກອະນາມັຍສາທາຣະນະ (Public Health Unit) ຊາບ, ຊຶ່ງທາງຜແນກຈະໄດ້ທຳການປ້ອງກັນບໍ່ໃຫ້ມີການ ແຜ່ຜາຍເຊື້ອນີ້ອອກໄປຕື່ມ. ການລາຍງານທຸກເທື່ອແມ່ນຖືເປັນຄວາມລັບ.

### ພຍາດນີ້ແຜ່ຜາຍຢ່າງໃດ?

- ຕົວພຍາດ giardia ມີຢູ່ໃນອາຈົມຂອງຄົນແລະສັດທີ່ຕິດເຊື້ອນີ້ຢູ່ແລ້ວ. ການຕິດເຊື້ອຈະເກີດຂຶ້ນເມື່ອຄົນຜູ້ນຶ່ງຊູນຖືກສານອາຈົມແລະໄດ້ກືນແມ່ທ້ອງເຂົ້າໄປ.
- ການຖ່າຍທອດເຊື້ອຈະເກີດຂຶ້ນເມື່ອບໍ່ໄດ້ລ້າງມືຫຼັງຈາກເຂົ້າຫ້ອງນ້ຳຫຼືຫຼັງຈາກປ່ຽນຜ້າອ້ອມ; ໂດຍການດື່ມນ້ຳທີ່ມີເຊື້ອພຍາດນີ້; ໂດຍການຈັບບາຍສັດທີ່ມີເຊື້ອ; ແລະ, ໃນກໍຣະນີທີ່ບໍ່ຄ່ອຍມີ, ແມ່ນດ້ວຍການກິນອາຫານທີ່ມີເຊື້ອນີ້.
- ສ່ວນຫຼາຍການຖ່າຍທອດເຊື້ອຈະເກີດຂຶ້ນໂດຍການຕິດຕໍ່ຈາກ ຄົນຕໍ່ຄົນ, ຢູ່ໃນສະພາບແວດລ້ອມເຊັ່ນໃນເຮືອນແລະໃນສູນດູແລເດັກ.
- ການຖ່າຍທອດເຊື້ອອາດເກີດຂຶ້ນໃນການຮ່ວມເພດທີ່ມີການຊູນຖືກສານອາຈົມ
- ຍາມທີ່ຕິດໄດ້ງ່າຍທີ່ສຸດແມ່ນຍາມທີ່ຄົນກຳລັງເຈັບປ່ວຍແລະຈະຖ່າຍທອດຕົວພຍາດອອກມາໃນອາຈົມຂອງລາວ (ຊຶ່ງອາດເກີດຂຶ້ນຢູ່ເປັນເວລາຫຼາຍເດືອນ).

### ມີອາການຫຍັງແດ່?

- ອາການທີ່ເປັນຫຼາຍທີ່ສຸດຂອງ giardiasis ແມ່ນຖ່າຍທ້ອງ, ເຈັບບິດໃນທ້ອງ, ຍື້ງທ້ອງ, ປຸ້ນທ້ອງ ອາຈົມແຫຼວແລະເປັນເມືອກມີສີຊີດ, ເມື່ອຍ, ແລະ ນ້ຳໜັກຕົວຫຼຸດລົງ.

- ບາງຄົນອາດຈະບໍ່ສໍ່ສະແດງອາການຫຍັງໝົດ, ຢ່າງໃດກໍດີເຂົາເຈົ້າກໍຍັງສາມາດແຜ່ເຊື້ອພຍາດໃຫ້ຄົນອື່ນໄດ້.
- ການເຈັບປ່ວຍຈະອອກອາການຄັ້ງແຣກ ລະຫວ່າງ 3–25 ມື້ (ສະເລັ່ຍປະມານ 7–10 ມື້) ຫຼັງຈາກຄົນຜູ້ນັ້ນຕິດເຊື້ອແລ້ວ.
- ຄົນທີ່ສຸຂພາບດີສ່ວນຫຼາຍຈະເຊົາພາຍໃນ 4–6 ອາທິດ. ໃນບາງກໍຣະນີ, ອາການຕ່າງໆອາດຈະເປັນຢູ່ດົນກວ່ານັ້ນ.

## ຈະກວດຫາພຍາດນີ້ໄດ້ຢ່າງໃດແລະຈະປິ່ນປົວວິທີໃດ?

- Giardiasis ສາມາດກວດຫາໄດ້ຢ່າງຖືກຕ້ອງແນ່ນອນໂດຍການກວດອາຈົມ, ຊຶ່ງທ່ານໝໍຈະເປັນຜູ້ສັ່ງການກວດນີ້ໃຫ້. ໃຫ້ໄປຫາທ່ານໝໍຂອງທ່ານຖ້າຫາກວ່າມີອາການ.
- ເປັນສິ່ງສຳຄັນທີ່ຄົນຖ່າຍທ້ອງຕ້ອງໄດ້ດື່ມນ້ຳຫຼາຍໆເພື່ອຫຼີກເວັ້ນສະພາວະຮ່າງກາຍຂາດນ້ຳ.
- ຢາສັ່ງຂອງແພດ, ຮວມທັງຢາ metronidazole ແລະ tinidazole, ແມ່ນໃຊ້ສຳລັບປົວພຍາດນີ້.

## ຜູ້ທີ່ສ່ຽງຫຼາຍທີ່ສຸດ

ຜູ້ທີ່ສ່ຽງຕໍ່ການຕິດພຍາດ giardiasis ຫຼາຍທີ່ສຸດແມ່ນ:

- ຜູ້ທີ່ໃກ້ຊິດກັບເດັກນ້ອຍທີ່ມີເຊື້ອນີ້, ເຊັ່ນເດັກຄົນອື່ນໆ, ພໍ່ແມ່, ແລະພະນັກງານດູແລເດັກ
- ຜູ້ທີ່ດື່ມນ້ຳທີ່ມີເຊື້ອພຍາດ, ເຊັ່ນພວກເດີນປ່າ ແລະ ພວກນອນປ່າແຄ່ມປີ້ງ.

## ຈະປ້ອງກັນໄດ້ຢ່າງໃດ?

ຈະປ້ອງກັນບໍ່ໃຫ້ຕິດເຊື້ອພຍາດ giardiasis ໄດ້ໂດຍ:

- ລ້າງມືໃຫ້ສະອາດທົ່ວເຖິງດີສເມີ ດ້ວຍສະບູແລະນ້ຳກ໊ອກຫຼັງຈາກໃຊ້ຫ້ອງນ້ຳ, ຈັບບາຍສັດ, ປ່ຽນຜ້າອ້ອມ, ຢູ່ໃນສະພາວະຢ່າງອື່ນທີ່ໄດ້ຕ້ອງຊູນສານອາຈົມ, ເຮັດວຽກໃນສວນ; ແລະກ່ອນປຸງແຕ່ງ ອາຫານ ແລະເຄື່ອງດື່ມ.
- ຢ່າດື່ມນ້ຳທີ່ບໍ່ທັນຜ່ານກັມມະວິທີ ຈາກຫ້ວຍ, ລຳທານ, ໜອງ, ເຂື່ອນ ແລະຖັງເກັບນ້ຳ. ການຕົ້ມນ້ຳຈາກແຫຼ່ງນ້ຳເຫຼົ່ານີ້ ນຶ່ງນາທີ ຈະຂ້າພຍາດ giardia ແລະແມ່ທ້ອງຊນິດອື່ນ ດ້ວຍ. ຢາເມັດກັ່ນນ້ຳອາດຈະຂ້າເຊື້ອພຍາດ giardia ໄດ້, ແຕ່ອາດຈະບໍ່ສາມາດຂ້າເຊື້ອ cryptosporidium ໄດ້. ເຄື່ອງຕອງນ້ຳບາງຊນິດອາດຈະກັ່ນເອົາແມ່ທ້ອງເຫຼົ່ານີ້ອອກໄດ້.
- ໃຫ້ຫຼີກເວັ້ນການດື່ມນ້ຳກ໊ອກບໍ່ຕົ້ມແລະອາຫານບໍ່ສຸກເມື່ອເດີນທາງໄປປະເທດຊຶ່ງນ້ຳປະປາອາດບໍ່ປອດພັຍ.

**ເພື່ອຫຼີກເວັ້ນບໍ່ໃຫ້ giardiasis ແຜ່ພາຍອອກໄປ:**

- ໃຫ້ເອົາເດັກນ້ອຍທີ່ຖ່າຍທ້ອງໄວ້ເຮືອນ ບໍ່ໃຫ້ໄປ ໂຮງຮຽນອະນຸບານ, ສູນດູແລເດັກ, ກຸ່ມຫຼິ້ນ, ຫຼື ສະອາບນໍ້າ ຈົນກວ່າການຖ່າຍທ້ອງຈະເຊົາຫາຍຂາດ.

ຖ້າທ່ານເປັນໂຣກຖ່າຍທ້ອງ giardiasis, ໃນລະຫວ່າງທີ່ກຳລັງຕິດເຊື້ອຢູ່ນັ້ນ:

- ຢ່າປຸງແຕ່ງອາຫານຫຼືເຄື່ອງດື່ມໃຫ້ຄົນອື່ນ
- ຢ່າໃຊ້ສະອາບນໍ້າ
- ຢ່າໃຊ້ຜ້າປູບ່ອນ, ຜ້າເຊັດໂຕ ແລະ ໃຊ້ເຄື່ອງຕັກອາຫານກິນ ຮ່ວມກັບຄົນອື່ນ.

**ຣາຍລະອຽດເພີ້ມເຕີມ - Public Health Units in NSW (ພແນກອະນາມັຍສາທາຣະນະ ໃນຣັດ** NSW)

ຖ້າຕ້ອງການຣາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ທ່ານໝໍຂອງທ່ານ, ໜ່ວຍອະນາມັຍສາທາຣະນະ ທ້ອງຖິ່ນ ຫຼື ສູນອະນາມັຍຊຸມຊົນ - ໃຫ້ເບິ່ງພາຍໃຕ້ຫົວຂໍ້ 'NSW Government' ທາງໜ້າຂອງປື້ມ ໂທຣະສັບ ຫົວຂາວ.

**ເຂດໃນຕົວເມືອງ**

| | |
|---|---|
| Central Sydney | 9515 3180 |
| South Eastern Sydney | 9382 8333 |
| Northern Sydney | 9477 9400 |
| South Western Sydney | 9828 5944 |
| Western Sydney | 9840 3603 |
| Wentworth | 4734 2022 |

**ເຂດຊົນນະບົດ**

| | |
|---|---|
| Central Coast | 4349 4845 |
| Mid North Coast | 6588 2750 |
| Mid Western | 6339 5548 |
| Hunter | 4924 6477 |
| Illawarra | 4255 2200 |
| New England | 6766 2288 |
| Northern Rivers | 6620 7500 |
| Macquarie | 6841 2216 |
| Southern | 4827 3428 |
| Greater Murray | 6021 4799 |
| Far West | (08) 8080 1499 |

**NSW Department of Health**
73 Miller Street
North Sydney NSW 2059
Tel. (02) 9391 9000
Fax. (02) 9391 9101

TTY. (02) 9391 9900

NSW Health website
www.health.nsw.gov.au